**ຖະແຫຼງການຂອງຄູ່ຮ່ວມພັດທະນາເອີຣົບ**

**ທີ່ກອງປະຊຸມໂຕະມົນຢູ່ ສປປ ລາວ**

ນະຄອນຫຼວງວຽງຈັນ, 19 ພະຈິກ 2013

ຄູ່ຮ່ວມພັດທະນາເອີຣົບທີ່ເຄື່ອນໄຫວຢູ່ ສປປ ລາວ ຄື: ສະຫະພາບເອີຣົບແລະບັນດາຊາດສາມະຊິກຂອງສະຫະພາບເອີຣົບພ້ອມດ້ວຍສະວິດເຊີແລນ ຂໍຍ້ອງຍໍຊົມເຊີຍລັດຖະບານ ສປປ ລາວ ຕໍ່ຄວາມຄືບໜ້າທີ່ ຍາດມາໄດ້ໃນດ້ານການເຕີບທາງເສດຖະກິດ, ຜົນການຫຼຸດຜ່ອນຄວາມທຸກຍາກແລະ ການພັດທະນາສັງ ຄົມ ຕະຫຼອດໄລຍະສາມປີທີ່ຜ່ານມາໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງ ຊາດຄັ້ງທີ 7.

ຄາດວ່າ: ການເຕີບໂຕທາງເສດຖະກິດທີ່ເຂັ້ມແຂງຂອງ ສປປ ລາວ ຍັງຄົງຈະສືບຕໍ່ໄປອີກໃນໄລຍະກາງ, ຢ່າງໃດກໍ່ດີ, ຍັງມີປະຊາຊົນລາວອີກປະມານໜຶ່ງລ້ານເຄິ່ງທີ່ດໍາລົງຊີວິດຢູ່ໃນຄວາມທຸກຍາກ ແລະ ຍັງມີປະຊາກອນອີກຈໍານວນຫຼາຍທີ່ດໍາລົງຊີວິດຢູ່ໃກ້ກັບເສັ້ນຄວາມທຸກຍາກຢ່າງໜ້າເປັນຫ່ວງ. ພົບວ່າ: ມີຄວາມແຕກໂຕນເພີ່ມຂຶ້ນລະຫວ່າງຄົນຮັ່ງແລະຄົນທຸກ, ລະຫວ່າງຊົນນະບົດແລະຕົວເມືອງ, ແລະຄອບຄົວ ຊົນນະບົດສ່ວນໃຫຍ່ ຍັງຄົງມີຊີວິດທີ່ຫຍຸ້ງຍາກ. ຄວາມທຸກຍາກດັ່ງກ່າວ ຖືກສະທ້ອນໃຫ້ເຫັນໃນບັນຫາ ການຂາດທາດອາຫານທີ່ຍັງຄົງຄ້າງໃນໝູ່ເດັກນ້ອຍ ແລະ ອັດຕາການຕາຍຂອງແມ່ທີ່ຍັງສູງ. ດ້ວຍເຫດ ນັ້ນ, ມື້ນີ້ ພວກເຮົາ ຈຶ່ງຢາກເຫັນການສົນທະນາທີ່ມີເນື້ອໃນເລິກເຊິ່ງແລະກົງໄປກົງມາກ່ຽວກັບວິທີທີ່ ພວກເຮົາ ຈະສາມາດຮ່ວມມືກັນແກ້ໄຂສິ່ງທ້າທາຍຕ່າງໆໄດ້ຢ່າງມີປະສິດທິຜົນ ແລະເລັ່ງຈັດຕັ້ງປະຕິ ບັດບັນດາເປົ້າໝາຍສະຫັດສະວັດ MDGs ໂດຍສະເພາະເປົ້າໝາຍທີ່ການຈັດຕັ້ງປະຕິບັດບໍ່ໄດ້ຕາມຄາດໝາຍ.

ບັນດາຄູ່ຮ່ວມພັດທະນາເອີຣົບ ໄດ້ໃຫ້ທຶນຊ່ວຍເຫຼືອປະມານ USD 550 ລ້ານເພື່ອສະໜັບສະໜຸນການຈັດຕັ້ງປະຕິ ບັດແຜນ 7 ຂອງລັດຖະບານ (7th NSEDP). ຕົວເລກດັ່ງກ່າວ ກວມເອົາຫຼາຍກ່ວາ 30 ສ່ວນຮ້ອຍຂອງ ຈໍານວນເງິນ ຊ່ວຍເຫຼືອຢ່າງເປັນທາງການODA ທັງໝົດທີ່ລັດຖະບານລາວ ໄດ້ຮັບມາຈົນຮອດປະຈຸບັນ. ODA ເກືອບທັງໝົດຂອງເອີ ຣົບ ແມ່ນສະໜອງໃຫ້ໃນຮູບຂອງເງິນຊ່ວຍເຫຼືອລ້າ.

ການຮ່ວມມືເພື່ອການພັດທະນາຂອງພວກເຮົາໃນການໃຫ້ການຊ່ວຍເຫຼືອແກ່ແຜນ 7 ແມ່ນເພື່ອສົ່ງເສີມການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ ໂດຍມີຈຸດສຸມທີ່ຈະແຈ້ງຄື: ປັບປຸງບໍລິການສາທາລະນະສຸກ, ປັບປຸງການສຶກສາໃຫ້ດີຂຶ້ນກ່ວາເດີມ ແລະ ສ້າງຊັບພະຍາກອນມະນຸດໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ; ປັບປຸງວຽກງານກະສິກຳແລະປ່າໄມ້, ອຳນວຍຄວາມສະດວກໃຫ້ແກ່ການຄ້າແລະທຸລະກິດ; ແລະ ຫຼຸດຜ່ອນໄພຂົ່ມຂູ່ຈາກບັນຫາ ລະເບີດທີ່ຍັງບໍ່ທັນແຕກ (UXO). ນອກນີ້ ບັນດາຂົງເຂດຮ່ວມມືທີ່ສຳຄັນໃນການຊ່ວຍເຫຼືອຂອງເອີຣົບ ຍັງກວມເອົາ ບັນຫາສິດທິມະນຸດ, ການປົກຄອງ, ການຊ່ວຍເຫຼືອໃຫ້ແກ່ອົງການຈັດຕັ້ງທາງສັງຄົມ ແລະ ການມີສ່ວນຮ່ວມຂອງພົນລະເມືອງ, ບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ສິ່ງແວດລ້ອມ.

ການນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ ແລະ ການສ້າງສັງຄົມໃຫ້ມີຄວາມອຸດົມພູນສຸກດ້ວຍເສດຖະກິດທີ່ມີຄວາມສາມາດຕ້ານທານຕໍ່ການຖືກກະທົບ ແລະ ການແຈກຢາຍໂອກາດທີ່ສະເໝີພາບ ນັ້ນຮຽກຮ້ອງໃຫ້ບໍ່ພຽງແຕ່ຕ້ອງເສີມຂະຫຍາຍຜົນກະທົບການນຳໃຊ້ຊັບພະຍາກອນການພັດທະນາທັງພາຍໃນແລະຕ່າງປະເທດ ແຕ່ຍັງຕ້ອງເລັ່ງລັດການ ປະຕິຮູບໃນດ້ານຕ່າງໆ ທີ່ຈະຊ່ວຍປັບປຸງຄຸນນະພາບການບໍລິການພາກລັດ ແລະ ສົ່ງເສີມການເຕີບໂຕແລະການພັດພັດທະນາແບບຍືນຍົງແລະແບບມີສ່ວນຮ່ວມທີ່ເຂົ້າເຖິງທຸກກຸ່ມຄົນ. ພາຍໃຕ້ເນື້ອໃນຈິດໃຈດັ່ງກ່າວ ແລະ ສອດຄ່ອງ ກັບຄຳຖະແຫຼງໃນກອງປະຊຸມໂຕະມົນຄັ້ງຜ່ານມາ ທາງຄູ່ຮ່ວມພັດທະນາເອີຣົບ ຂໍເນັ້ນໜັກບາງປະ ເດັນຄືດັ່ງຕໍ່ໄປນີ້:

1. **ການປົກຄອງທີ່ດີ, ເຄົາລົບສິດທິມະນຸດ, ແລະ ອົງການຈັດຕັ້ງທາງສັງຄົມ ທີ່ຕັ້ງ ໜ້າ ຖືເປັນເສົາຄ້ຳໃຈກາງສຳຄັນຂອງການພັດທະນາທີ່ກົມກຽວແລະຍືນຍົງ**

ຄູ່ຮ່ວມພັດທະນາເອີຣົບ ຍິນດີທີ່ຈະເຫັນຄວາມພະຍາຍາມໃນການຈັດຕັ້ງປະຕິບັດການປັບປຸງປະຕິຮູບດ້ານສະຖາບັນຂອງລັດຖະບານຢ່າງຕໍ່ເນື່ອງແລະຍືນຍົງໂດຍແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ເພື່ອ ເສີມຂະຫຍາຍບົດບາດໃນການກວດສອບຂອງສະພາແຫ່ງຊາດ ແລະ ການລົງເລິກເຂົ້າເຖິງ ປະຊາຊົນຂອງສະມາຊິກສະພາໃນເຂດເລືອກຕັ້ງຂອງຕົນ ເພື່ອສົ່ງເສີມການມີສ່ວນຮ່ວມຂອງ ປະຊາຊົນ ໃນການພັດທະນາຊາດແລະສ້າງຄວາມເຂັ້ມແຂງໃຫ້ແກ່ການປົກຄອງລັດດ້ວຍກົດໝາຍ ຜ່ານການຈັດຕັ້ງປະຕິບັດແຜນແມ່ບົດຂະແໜງກົດໝາຍ. ພວກເຮົາ ໃຫ້ຄຳໝັ້ນວ່າຈະໃຫ້ການຮ່ວມມື ໃນການຊ່ວຍເຫຼືອແກ່ການປັບປຸງປະຕິຮູບເຫຼົ່ານັ້ນ ເຊິ່ງຖືເປັນກະແຈສຳຄັນຕໍ່ການປັບປຸງສິດທິມະນຸດຂັ້ນພື້ນຖານ, ເສີມສ້າງການສະໜອງບໍລິການຂອງພາກລັດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ບັນດາສະຖາບັນແຫ່ງຊາດ.

ພວກເຮົາ ເປັນເອກະພາບນຳບັນດາຂໍ້ມູນໃນເອກະສານປະກອບກອງປະຊຸມໂຕະມົນ (RTM) ທີ່ວ່າ: ອົງການຈັດຕັ້ງທາງສົງຄົມ ຢູ່ ສປປ ລາວ ຍັງເປັນທໍ່ແໜງແລະມີຂະໜາດ ນ້ອຍ ໂດຍການສ້າງແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ອົງການຈັດຕັ້ງທາງສັງຄົມ ຍັງຄົງເປັນສິ່ງທ້າທາຍ. ກ່ຽວແກ່ກັບເລື່ອງນີ້, ໃນທັດສະນະຂອງພວກເຮົາເຫັນວ່າ: ປຜ່ານມາເປັນປີໜຶ່ງທີ່ຫຍຸ້ງຍາກ. ນີ້ລວມເຖິງ, ຍົກຕົວຢ່າງ:

ກົນໄກທາງສະຖາບັນທີ່ມີຈຳກັດສຳລັບການສົນທະນາແລກປ່ຽນດ້ານນະໂຍບາຍກັບລັດຖະ ບານ, ຂັ້ນຕອນຈົດທະບຽນສະມາຄົມທີ່ບໍ່ຫວັງຜົນກຳໄລ (NPAs) ທີ່ສະຫຼັບຊັບຊ້ອນ ແລະ ແວດລ້ອມເຄື່ອນໄຫວທີ່ຫຍຸ້ງຍາກສຳລັບອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ NGOs (INGOs) ເຊິ່ງຍິ່ງຈະຫຍຸ້ງຍາກຂຶ້ນຕື່ມອີກ ຖ້າຫາກຮ່າງບົດແນະ ນຳວ່າດ້ວຍ INGO ໃນສະບັບຮູບແບບ ປະຈຸບັນຖືກຮັບຮອງເອົາ. ຄູ່ຮ່ວມພັດທະນາເອີຣົບ ໄດ້ສະໜອງ ຄຳເຫັນລະອຽດກ່ຽວກັບວິທີປັບປຸງ ຮ່າງບົດແນະນຳວ່າດ້ວຍ INGO ສະບັບດັ່ງກ່າວ ແລະ ພວກເຮົາຫວັງ ວ່າ: ຂໍ້ສະເໜີຕ່າງໆຂອງພວກເຮົາຈະໄດ້ຮັບການພິຈາລະນາ.

ພວກເຮົາຮັບຮູ້ເຖິງຄວາມຈຳເປັນທີ່ຕ້ອງສ້າງຄວາມເຂົ້າໃຈທີ່ດີຂຶ້ນກ່ວາເດີມພາຍໃນ ລັດຖະບານກ່ຽວກັບ ຜົນປະໂຫຍດຈາກວຽກຂອງອົງການຈັດຕັ້ງທາງສັງຄົມທີ່ປະກອບສ່ວນ ໃຫ້ແກ່ປະເທດ ກໍ່ຄື ເພື່ອເຮັດໃຫ້ NPAs ສາມາດດຳເນີນການປະກອບສ່ວນຂອງຕົນໄດ້ຢ່າງມີປະສິດ ທິຜົນເຂົ້າໃນການພັດທະນາຊາດ. ການຍົກສູງໝາກຜົນຈາກການຮ່ວມມືເພື່ອການພັດທະນາ ຂອງພວກ ເຮົາຮຽກຮ້ອງໃຫ້ມີການຂະຫຍາຍ ການຮ່ວມມືໃຫ້ກ້ວາງອອກ, ຍອມຮັບຄວາມຫຼາກຫຼາຍ ແລະ ຮັບຮູ້ບົດບາດສະເພາະ ແລະ ຄວາມສາ ມາດທີ່ຫຼາກຫຼາຍເຊິ່ງທຸກພາກສ່ວນກ່ຽວຂ້ອງ ນຳມາ ປະກອບສ່ວນເພື່ອບັນລຸໄດ້ເຖິງຄວາມສຳເລັດໃນການຮ່ວມມືດ້ານ ການພັດທະນາ. ດ້ວຍເຫດນັ້ນ, ພວກເຮົາ ຈິ່ງຂໍຊົມເຊີຍຄວາມຄືບໜ້າໃນການຈົດທະບຽນ NPAs, ການ ມີສ່ວນຮ່ວມທີ່ເພີ່ມຂຶ້ນຂອງ NPAs ໃນໜ່ວຍງານປຶກສາຫາລືຂອງຂະແໜງການກັບຄູ່ຮ່ວມພັດທະນາ (SWGs) ແລະ ບັນດາໜ່ວຍງານປຶກສາຫາລືຍ່ອຍຕ່າງໆ (Sub-SWGs) ແລະ ພວກເຮົາ ດີໃຈທີ່ເຫັນຂະ ບວນການຄັດເລືອກແບບສະໝັກໃຈທີ່ຊ່ວຍໃຫ້ NPAs ແລະ INGOs ສາມາດເຂົ້າມີສ່ວນຮ່ວມໃນກອງປະ ຊຸມໂຕະມົນປີນີ້.

ພວກເຮົາ ເປັນເອກະພາບວ່າ: ຜົນໄດ້ຮັບ ຈາກການພັດທະນາ ຕ້ອງແມ່ນເພື່ອປະໂຫຍດຂອງປະຊາຊົນ. ດ້ວຍເຫດນັ້ນ, ກະບອກສຽງແລະຄວາມ ຕ້ອງການຂອງເຂົາເຈົ້າ ຕ້ອງເປັນທິດນຳພື້ນຖານໃຫ້ແກ່ການຮ່ວມມືຂອງພວກເຮົາ ເພື່ອໃຫ້ພວກເຮົາ ສາມາດບັນລຸຜົນໄດ້ຮັບເຫຼົ່ານັ້ນ. ດ້ວຍເຫດນັ້ນ, ພວກເຮົາ ຈິ່ງພ້ອມທີ່ຈະໃຫ້ການຊ່ວຍເຫຼືອແກ່ລັດ ຖະບານ ລາວໃນການສ້າງແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ບັນດາອົງ ການຈັດຕັ້ງທາງສັງຄົມເພື່ອ ອຳນວຍ ຄວາມສະດວກໃຫ້ແກ່ການປະກອບສ່ວນ ຢ່າງເຕັມກຳລັງຂອງເຂົາເຈົ້າເພື່ອຊ່ວຍບັນລຸ MDGs ແລະ ເຄື່ອນໄຫວເປັນເອກະພາບກັບວຽກຂອງລັດ ຖະບານ, ພວກເຮົາຕັ້ງໃຈທີ່ຈະສຸມການຮ່ວມມື ເພື່ອການພັດທະນາຂອງພວກເຮົາໃສ່ຄວາມພະຍາຍາມ ດັ່ງກ່າວນີ້.

ພວກເຮົາ ຖືວ່າ: ການເຄົາລົບສິດທິມະນຸດ ຖືເປັນເງື່ອນໄຂຈຳເປັນເບື້ອງຕົ້ນສຳລັບການພັດທະນາ ທີ່ມີຄວາມກົມກຽວແລະຍືນຍົງຂອງ ສປປ ລາວ. ບັນດາຄູ່ຮ່ວມພັດທະນາເອີຣົບ ມີຄວາມໝູ້ນໝັ້ນ ຢ່າງແຮງກ້າຕໍ່ຫຼັກການສາກົນວ່າດ້ວຍການປົກປ້ອງແລະສົ່ງເສີມສິດທິມະນຸດທາງການເມືອງ, ສັງຄົມ ແລະເສດຖະກິດຂອງບຸກຄົນ ຕະຫຼອດເຖິງອິດສະພາບຂອງພົນລະເມືອງ. ດັ່ງນັ້ນ, ພວກເຮົາ ຈິ່ງຍິນ ດີກັບຄຳໝັ້ນແລະ ຄວາມພະຍາຍາມຕ່າງໆຂອງລັດຖະບານໃນການປະຕິບັດພັນທະຕ່າງໆຂອງສາກົນໃນການສົ່ງ

ເສີມ ການປົກຄອງລັດດ້ວຍກົດໝາຍເພື່ອການສົ່ງເສີມແລະປົກປ້ອງສິດທິພື້ນຖານຕ່າງໆຂອງປະຊາຊົນທຸກຄົນ ດັ່ງທີ່ໄດ້ຖະແຫຼງໄວ້ໃນຫວ່າງບໍ່ດົນມານີ້ໂດຍພະນະ ທ່ານຮອງນາຍົກລັດຖະມົນຕີ ດຣ. ທອງລຸນ ສີສຸລິດ ທີ່ກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດສະ ໄໝທີ 68.

ຢ່າງໃດກໍ່ດີ, ພວກເຮົາ ຍັງສັງເກດເຫັນວ່າ: ການປັບປຸງກົດໝາຍແຫ່ງຊາດເພື່ອສະທ້ອນໃຫ້ເຫັນບັນດາພັນທະສາກົນຕ່າງໆດ້ານສິດທິມະນຸດ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການມີສ່ວນຮ່ວມ, ແກ່ກະບອກສຽງແລະການເຂົ້າເຖິງຄວາມຍຸຕິທຳຂອງພົນລະເມືອງຕາມທີ່ໄດ້ອະທິບາຍໄວ້ໃນແຜນຫ້າປີ (NSEDP) ແລະ ແຜນແມ່ບົດຂອງຂະແໜງກົດໝາຍນັ້ນເຫັນວ່າ: ມີທ່ວງທ່າຊ້າລົງ. ດ້ວຍເຫດນັ້ນ, ພວກເຮົາ ຈຶ່ງຫວັງທີ່ຈະໄດ້ສົນທະນາແລກປ່ຽນບັນດາສິ່ງທ້າທາຍແລະມາດຕະການຕ່າງໆທີ່ມີຢູ່ເພື່ອເລັ່ງຄວາມຄືບໜ້າ ແລະ ພວກເຮົາ ພ້ອມທີ່ຈະໃຫ້ການຊ່ວຍເຫຼືອແກ່ລັດຖະບານໃນການດຳເນີນຄວາມພະຍາຍາມດັ່ງກ່າວນີ້.

ປະຊາຊົນ ບໍ່ສາມາດປະຕິບັດສິດຂອງຕົນເອງໄດ້ເວັ້ນເສຍແຕ່ວ່າ: ເຂົາເຈົ້າ ໄດ້ຮັບແຈ້ງຂໍ້ມູນຢ່າງຄົບຖ້ວນ ແລະ ພວກເຮົາ ເປັນເອກະພາບກັບຂໍ້ມູນຕ່າງໆຈາກເອກະສານປະກອບກອງປະຊຸມໂຕະມົນທີ່ໄດ້ໃຫ້ຂໍ້ສັງເກດວ່າ: ຈຳເປັນຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມເຂົ້າໃຈຂອງພົນລະເມືອງທີ່ມີຕໍ່ສິດແລະພັນທະຕ່າງໆຂອງເຂົາເຈົ້າ ເພື່ອທີ່ວ່າເຂົາເຈົ້າ ຈະສາມາດໄດ້ຮັບແລະປະຕິບັດສິດທິຕ່າງໆຂອງເຂົາເຈົ້າໄດ້. ດ້ວຍເຫດນັ້ນ, ພວກເຮົາ ຈຶ່ງຂໍຊຸກຍູ້ໃຫ້ລັດຖະບານລາວເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບບັນດາຂໍ້ກຳນົດຕ່າງໆຂອງບັນດາກົດໝາຍແຫ່ງຊາດແລະສົນທິສັນຍາສາກົນຕ່າງໆເພື່ອປູກຈິດສຳນຶກໃນກຸ່ມປະຊາກອນລາວໃຫ້ຮູ້ກ່ຽວກັບສິດແລະພັນທະຕ່າງໆຂອງພົນລະເມືອງ, ແລະ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍໃຫ້ຮັບໃຊ້ຜົນປະໂຫຍດຂອງພົນລະເມືອງແລະສັງຄົມລາວ.

ຄູ່ຮ່ວມພັດທະນາເອີຣົບ ເຫັນວ່າ: ການຫາຍຕົວແບບບໍ່ມີຄຳອະທິບາຍຂອງ ທ. ສົມບັດ ສົມພອນ ນັ້ນເປັນເລື່ອງທີ່ຮ້າຍແຮງຫຼາຍ. ພວກເຮົາ ສະແດງຄວາມເປັນຫ່ວງຢ່າງສູງຕໍ່ຄວາມປອດໄພແລະສະຫວັດດີການຂອງຜູ້ກ່ຽວ. ຄູ່ຮ່ວມພັດທະນາເອີຣົບ ເຫັນວ່າ: ຄຳຖະແຫຼງຕ່າງໆໂດຍລັດຖະບານແຫ່ງ ສປປ ລາວ ທີ່ມີກ່ຽວກັບກໍລະນີດັ່ງກ່າວນັ້ນ ບໍ່ພຽງພໍ ແລະ ບໍ່ມີນ້ຳໜັກ ພໍ. ພວກເຮົາ ຂໍຮຽກຮ້ອງໃຫ້ລັດຖະບານແຫ່ງ ສປປ ລາວ ດຳເນີການສືບສວນ-ສອບສວນໃນລັກສະນະຄົບຖ້ວນຮອບດ້ານແລະໂປ່ງໃສຕໍ່ຄະດີດັ່ງກ່າວ ແລະ ໃຫ້ການຮ່ວມມືຢ່າງເຕັມສ່ວນກັບບັນດາອົງການຕ່າງໆຂອງ ສປຊ ເຊັ່ນ: ໜ່ວຍງານແກ້ໄຂກໍລະນີການບັງຄັບຫາຍຕົວ ທີ່ຕັ້ງຢູ່ເຈນນີວາ. ກ່ຽວແກ່ກັບເລື່ອງນີ້, ພວກເຮົາ ຮ້ອງຂໍມາຍັງ ສປປ ລາວ ໃຫ້ສັດຕະຍາບັນຕໍ່ສົນທິສັນຍາສາກົນວ່າດ້ວຍການປົກປ້ອງທຸກຄົນຈາກການບັງຄັບຫາຍຕົວ.

## 2. ເລັ່ງຄວາມຄືບໜ້າເພື່ອບັນລຸ MDGs

ສປປ ລາວ ຍາດໄດ້ຄວາມຄືບໜ້າທີ່ດີໃນການບັນລຸ MDGs. ລັດຖະບານ ໄດ້ປະສົບຜົນສຳເລັດໃນການປັບປຸງປະຕິຮູບໃນຂະແໜງສາທາແລະສຶກສາທີ່ເປັນຂະແໜງບູລິມະສິດອັນດັບຕົ້ນ ໂດຍເປັນຜົນ

ເຮັດໃຫ້ການເຂົ້າເຖິງບໍລິການເຫຼົ່ານີ້ມີເພີ່ມຂຶ້ນ. ການ ປະຕິຮູບໄດ້ປະກອບສ່ວນເຂົ້າໃນການຫຼຸດຜ່ອນການຕາຍຂອງແມ່ແລະເດັກ ແລະ ເພີ່ມອັດຕາການເຂົ້າຮຽນໃນລະດັບປະຖົມສຶກສາ. ຢ່າງໃດກໍ່ດີ, ດັ່ງທີ່ໄດ້ລາຍງານໄວ້ໃນບົດລາຍງານຄວາມຄືບໜ້າຂອງ MDG ສະບັບທີສາມ, ລາວ ຍັງມີອີກຫ້າເປົ້າໝາຍທີ່ບໍ່ໄດ້ຄາດໝາຍ ຄື: MDG 1 (ການຂາດທາດອາຫານ); MDG 2 (ອັດຕາສືບຕໍ່ຮຽນທີ່ຍັງຕໍ່າ); MDG4 (ອັດຕາການຕາຍຂອງເດັກຕໍ່າກ່ວາ 5 ປີ); MDG 5 (ອັດຕາການຕາຍຂອງແມ່); MDG 7 (ຄວາມຍືນຍົງຂອງສິ່ງແວດລ້ອມ) ແລະ MDG 9 (ລບຕ/UXO). ນີ້ ສະແດງໃຫ້ເຫັນວ່າ: ຄຸນະພາບຂອງບໍລິການພາກລັດ ຍັງເປັນຂົງເຂດທີ່ໜ້າເປັນຫ່ວງ. ສິ່ງທ້າທາຍສໍາຄັນ ຈຶ່ງແມ່ນການຈັດຕັ້ງປະຕິບັດການປະຕິຮູບບູລິມະສິດທີສອງ ເພື່ອປັບປຸງຄຸນະພາບຂອງບໍລິການ ເຊິ່ງຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ການຕິດຕາມກວດກາແລະຄວາມຮັບຜິດຊອບໃນພາກລັດແລະເອກະຊົນເພື່ອຮັບປະກັນຄຸນນະພາບຂອງບໍລິການ.

ຕົວຊີ້ວັດສໍາຄັນຢ່າງໜຶ່ງ ແມ່ນການຫຼຸດຜ່ອນບັນຫາການຂາດທາດອາຫານທີ່ບໍ່ໄດ້ຕາມຄາດໝາຍ. ບົດລາຍງານຄວາມຄືບໜ້າຂອງ MDG ພົບວ່າ: ສປປ ລາວ ຍັງພະເຊີນສິ່ງທ້າທາຍຫຼາຍຢ່າງໃນດ້ານການຄໍ້າປະກັນສະບຽງອາຫານ ແລະ ຍັງຄົງມີອັດຕາຂາດທາດອາຫານທີ່ໜ້າເປັນຫ່ວງ ເຊິ່ງໃນໄລຍະຍາວສາມາດສົ່ງຜົນກະທົບຮ້າຍແຮງຕໍ່ການພັດທະນາທາງມັນສະໝອງ, ສຸຂະພາບ ແລະ ວຽກງານຫຼຸດຜ່ອນຄວາມທຸກຍາກ. ບັນຫາເດັກຂາດສານອາຫານ ຍັງຄົງເປັນສິ່ງທ້າທາຍຫຼັກ ໃນຂະນະທີ່ອັດຕາການຫຼຸດລົງຂອງບັນຫາ ການໄດ້ຮັບໂພຊະນາການບໍ່ພຽງພໍ ກໍ່ຍັງຊ້າຫຼາຍ; ເມື່ອເບິ່ງຕາມການເຕີບ ໂຕຂອງປະຊາກອນ, ຈຶ່ງມີ ຄວາມເປັນໄປໄດ້ສູງທີ່ຈໍານວນເດັກຂາດສານອາຫານ ຈະເພີ່ມສູງຂຶ້ນແທນທີ່ຈະຫຼຸດລົງ. ການແກ້ໄຂບັນຫາການຂາດ ທາດອາຫານ ຈໍາເປັນຕ້ອງເພີ່ມການເຂົ້າເຖິງສະບຽງອາຫານ, ການສະໜອງແລະການບໍລິໂພກອາຫານ ຫຼາກຫຼາຍໝູ່, ຮັບປະກັນການເຂົ້າເຖິງແຫຼ່ງອາຫານ ແລະ ຊັບພະຍາກອນຈໍາເປັນຕ່າງໆສໍາລັບການຜະ ລິດສະບຽງອາຫານ; ການເຂົ້າເຖິງນໍ້າສະອາດແລະສຸຂາພິບານ ແລະ ສະໜອງບໍລິການສຶກສາແລະສາ ທາທີ່ມີຄຸນະພາບ. ສິ່ງນີ້ ຮຽກຮ້ອງໃຫ້ມີການນໍາໃຊ້ວິທີການດໍາເນີນງານຮ່ວມກັບທຸກຂະແໜງການທີ່ກ່ຽວຂ້ອງ ແລະ ເໜືອສິ່ງອື່ນໃດນັ້ນ ກໍ່ແມ່ນການສ້າງເງື່ອນໄຂດ້ານນະໂຍບາຍທີ່ເອື້ອອໍານວຍໃຫ້ແກ່ການຕ້ານສາເຫດພື້ນຖານທີ່ກໍ່ໃຫ້ເກີດບັນຫາການຂາດເຂີນດ້ານສະບຽງອາຫານແລະການຂາດທາດອາຫານ.

ດ້ວຍເຫດນັ້ນ, ພວກເຮົາ ຈຶ່ງຍິນດີກັບມະຕິຂອງລັດຖະບານລາວທີ່ໄດ້ຕັດສິນໃຈໃນໄລຍະກອງປະຊຸມໂຕະມົນຂັ້ນທ້ອງຖິ່ນທີ່ແຂວງຫຼວງນໍ້າທາເມື່ອເດືອນມິຖຸນາ 2013 ໂດຍຈະລິເລີ່ມການສ້າງແຜນດໍາເນີນງານຮ່ວມຫຼາຍຂະແໜງການວ່າດ້ວຍການຄໍ້າປະກັນສະບຽງອາຫານແລະໂພຊະນາການ. ນີ້ ຈະລວມເອົາບັນດາກະຊວງທີ່ກ່ຽວຂ້ອງ ກໍ່ຄື ອໍານາດການປົກຄອງຂັ້ນແຂວງແລະຂັ້ນເມືອງ. ການຜັນຂະຫຍາຍແຜນດໍາເນີນງານດັ່ງກ່າວ (ດັ່ງທີ່ໄດ້ໃຫ້ຂໍ້ສັງເກດໄວ້ໃນເອກະສານປະກອບກອງປະຊຸມໂຕະມົນ) ແມ່ນຈະສືບຕໍ່ປະກອບສ່ວນເຂົ້າໃນການເລັ່ງບັນລຸ MDGs. ພວກເຮົາ ຍິນດີປະກອບສ່ວນພາຍໃຕ້ການຊີ້ນໍາ-ນໍາພາແລະທິດນໍາຂອງລັດຖະບານລາວກ່ຽວກັບວິທີທີ່ຄູ່ຮ່ວມພັດທະນາສາມາດໃຫ້ການຊ່ວຍເຫຼືອ ກໍ່ຄື

ການກຳນົດບູລິມະສິດດ້ວຍການເພີ່ມຊັບພະຍາກອນຂອງລັດເຂົ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວ.

## 3. ສິ່ງທ້າທາຍດ້ານການເງິນ, ຄວາມໂປ່ງໃສດ້ານງົບປະມານ ແລະ ຄວາມຮັບຜິດຊອບ

ເສດຖະກິດຂອງ ສປປ ລາວ ໄດ້ເຕີບໂຕໃນອັດຕາສະເລ່ຍທີ່ 8 ສ່ວນຮ້ອຍຕໍ່ປີ ໂດຍມີການຂະຫຍາຍຕົວຂອງສິນເຊື່ອທີ່ໄວ ແລະ ການໄຫຼເຂົ້າຈຳນວນຫຼາຍຂອງການລົງທຶນໂດຍກົງຈາກຕ່າງປະເທດ (FDI). ການ ເຕີບໂຕດັ່ງກ່າວ ຖືເປັນທີ່ໜ້າຍົກຍ້ອງເປັນຢ່າງຍິ່ງ. ແຕ່ເຖິງຢ່າງໃດກໍ່ດີ, ໃນບົດລາຍງານການປຶກສາຫາລື ຂໍ້ IV ຂອງ ອົງການ IMF ໄດ້ສະຫຼຸບວ່າ: ລາຄາສະບຽງອາຫານທີ່ເພີ່ມສູງຂຶ້ນ ກຳລັງເປັນຕົວເລັ່ງເງິນເຟີ້ ເຊິ່ງສິ່ງຜົນກະທົບໃນທາງລົບຕໍ່ຜູ້ທີ່ທຸກຍາກທີ່ສຸດ. ການເຕີບໂຕຂອງສິນເຊື່ອ ເຊິ່ງສ່ວນໜຶ່ງແມ່ນ ຍ້ອນການເພີ່ມການໃຊ້ຈ່າຍຂອງພາກລັດ ໄດ້ສ້າງຄວາມກັງວົນກ່ຽວກັບຄວາມເຂັ້ມແຂງຂອງລະບົບການທະນາຄານ. ການຂາດດຸນບັນຊີ ພົບວ່າ: ມີສະພາບຮ້າຍແຮງຂຶ້ນຕື່ມ ອັນເປັນຜົນຍ້ອນການແຂງ ຄ່າຂອງສະກຸນເງິນໃນຄ່າຕົວຈິງ, ການເພີ່ມຂຶ້ນຂອງການຂາດດຸນງົບປະມານ, ແລະ ຄວາມຕ້ອງການພາຍໃນທີ່ສູງຂຶ້ນ. ການເພີ່ມຂຶ້ນຂອງງົບປະມານການເງິນທີ່ມີຢູ່ປະຈຸບັນ ໄດ້ເຮັດໃຫ້ສະພາບອ່ອນໄຫວມີເພີ່ມ ສູງຂຶ້ນ. ການທີ່ຈະບັນລຸການເຕີບໂຕແບບຍືນຍົງໃນອັດຕາເຕີບໂຕທີ່ສູງພາຍໃນໄລຍະກາງນັ້ນຮຽກ ຮ້ອງໃຫ້ຕ້ອງສ້າງຄວາມເຂັ້ມແຂງແກ່ນະໂຍບາຍການເງິນດ້ວຍການປັບປຸງການເກັບອາກອນແລະ ສຸມ ໃສ່ ການໃຊ້ຈ່າຍທາງສັງຄົມທີ່ເປັນບູລິມະສິດແລະການລົງທຶນທີ່ສ້າງຜົນປະໂຫຍດ ຫຼືການຜະລິດ.

ການຄຸ້ມຄອງການເງິນພາກລັດທີ່ມີປະສິດທິຜົນແລະມີປະສິດທິພາບ ຖືເປັນພື້ນຖານໃຈກາງຈຳເປັນສຳລັບການພັດທະນາຊາດແລະການຫຼຸດຜ່ອນຄວາມທຸກຍາກ ໂດຍສະເພາະຜ່ານການຮັບປະກັນການເຕີບໂຕທາງເສດຖະກິດແບບຍືນຍົງ ແລະ ການປັບປຸງປະສິດທິພາບຂອງບໍລິການພາກລັດ. ພວກເຮົາ ເປັນເອກະພາບກັບລັດຖະບານລາວທີ່ວ່າ: ການສະໜອງທຶນໃຫ້ແກ່ການຈັດຕັ້ງປະຕິບັດບັນດາການປະຕິຮູບໃຈກາງສຳຄັນຕ່າງໆ ນັ້ນຈະເປັນສິ່ງທ້າທາຍສຳຄັນ ເມື່ອພິຈາລະນາຈາກຂໍ້ຈຳກັດດ້ານການເງິນທີ່ມີຢູ່. ດັ່ງນັ້ນ, ການປັບປຸງປະຕິຮູບຕ່າງໆໃນລະບົບຄຸ້ມຄອງການເງິນພາກລັດ ຈິ່ງຈະເປັນຂໍກະແຈໃນການບັນລຸບັນດາຈຸດປະສົງຂອງການປັບປຸງປະຕິຮູບເຫຼົ່ານັ້ນ ແລະ ປັບປຸງຄຸນະພາບຂອງການໃຊ້ຈ່າຍ. ນອກຈາກນັ້ນ, ຄວາມໂປ່ງໃສທາງດ້ານການເງິນ ໂດຍສະເພາະໃນດ້ານທີ່ກ່ຽວກັບງົບປະມານແຫ່ງຊາດ  ກໍ່ຖືເປັນອີກເຄື່ອງມືໜຶ່ງທີ່ສຳຄັນໃນການບັນລຸການປົກຄອງທີ່ດີ, ເປັນປັດໃຈສຳຄັນສຳລັບການພັດທະນາເສດຖະກິດ ແລະ ການແກ້ໄຂຄວາມທຸກຍາກ. ການດຳເນີນບາດກ້າວທີ່ເດັດຂາດໃນການຕ້ານການສໍ້ລາດບັງຫຼວງ ແລະ ການສ້າງແວດລ້ອມເຮັດທຸລະກິດທີ່ມີລັກສະນະໂປ່ງໃສແລະສາມາດຄາດເດົາໄດ້  ກໍ່ ຖືວ່າເປັນວຽກງານທີ່ສຳຄັນຫຼາຍເຊັ່ນກັນ.

ຂອບເສດຖະກິດມະຫາພາກແລະງົບປະມານແຫ່ງລັດ ຖືເປັນໜຶ່ງໃນເຄື່ອງມືທີ່ສຳຄັນສຸດສຳລັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ແລະ ດ້ວຍຄວາມສຳຄັນຄືດັ່ງກ່າວນັ້ນ, ເຄື່ອງມື

ເຫຼົ່ານັ້ນ ຄວນລວມເອົາທຸກລາຍຮັບ, ລາຍຈ່າຍແລະການກູ້ຢືມຂອງລັດ. ຢ່າງໃດກໍ່ດີ, ໃນປະຈຸບັນ, ຍັງມີຄວາມບົກພ່ອງສູງ ບໍ່ວ່າຈະເປັນດ້ານການຄາດເດົາກ່ຽວກັບແລະຄວາມໜ້າເຊື່ອຖືຂອງງົບປະມານແຫ່ງຊາດ. ນີ້ ສະແດງໃຫ້ເຫັນເຖິງສິ່ງທ້າທາຍບໍ່ພຽງແຕ່ຕໍ່ລັດຖະບານລາວ ແຕ່ຍັງເປັນສິ່ງທ້າທາຍຕໍ່ຄູ່ຮ່ວມ  ພັດທະນາ ໃນດ້ານໜຶ່ງກໍ່ເພື່ອ ເຮັດໃຫ້ເຂົາເຈົ້າສາມາດຮັບປະກັນໄດ້ເຖິງສອດຄ່ອງລະຫວ່າງແຜນຫ້າປີ, ການຈັດສັນງົບ ປະມານປະຈຳປີ ແລະ ການຈັດຕັ້ງປະຕິບັດງົບປະມານຂອງລັດ ແລະອີກດ້ານໜຶ່ງ ກໍ່ເພື່ອເປັນການເອື້ອອຳນວຍແກ່ການຈັດສັນງົບປະມານແລະການສ້າງແຜນງານຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາເອງ. ພວກເຮົາ ດີໃຈ ກັບຂໍ້ມູນ ທີ່ສະໜອງໃຫ້ໃນເອກະສານປະກອບກອງປະຊຸມໂຕະມົນ ທີ່ເວົ້າເຖິງການສະໜອງທຶນແລະແຫຼ່ງລາຍຮັບທີ່ສະໜອງໃຫ້ ແກ່ແຜນ 7 ຈົນມາເຖິງປະຈຸບັນແລະ ພວກເຮົາ ໃຫ້ ການສະໜັບສະໜູນຄວາມຈຳເປັນທີ່ຕ້ອງຂະຫຍາຍຈຸດສຸມຂອງພວກເຮົາຈາກການຄຸ້ມຄອງການຊ່ວຍ ເຫຼືອ ໄປສູ່ ການອຳນວຍຄວາມສະດວກ, ຈູດໜຸນ ແລະ ຍົກສູງແກ່ບັນດາຜົນກະທົບທີ່ ເກີດຈາກຫຼາກຫຼາຍແຫຼ່ງທຶນເພື່ອການພັດທະນາ ທັງຈາກພາຍໃນແລະຕ່າງປະເທດ. ນີ້ຄວນໄປຄຽງຄູ່ກັບ ການຫຼຸດຜ່ອນການເອື່ອຍອີງໃສ່ການຊ່ວຍເຫຼືອ ໂດຍສະເພາະເມື່ອລັດຖະບານລາວຈຳເປັນຕ້ອງປັບ ຄວາມສົມດຸນລະຫວ່າງການລົງທຶນໃສ່ 'ການສ້າງຄວາມຮູ້ ຫຼື ຊັບພະຍະກອນມະນຸດ' ກັບ ການລົງທຶນ ໃສ່ 'ການສ້າງພື້ນຖານໂຄງລ່າງ' ເພື່ອການພັດທະນາ ໃນຂະນະທີ່ບໍ່ຕ້ອງເອື່ອຍອີງໃສ່ບັນດາຜູ້ໃຫ້ທຶນ ພຽງຢ່າງດຽວ ເພື່ອຮັບປະກັນການສືບຕໍ່ສະໜອງທຶນໃຫ້ແກ່ການລົງທຶນໃສ່ 'ການສ້າງຊັບພະຍາກອນ ມະນຸດ'. ກ່ຽວແກ່ກັບເລື່ອງນີ້, ການລະດົມຊັບພະຍາກອນຂອງຕົນເອງ ໂດຍລັດຖະບານລາວ ຄວນມີບົດ ບາດສຳຄັນ. ໃນສະພາບເງື່ອນໄຂດັ່ງກ່າວ, ມີຄວາມສຳຄັນທີ່ຕ້ອງເນັ້ນວ່າ: ເປັນໜ້າທີ່ຮັບຜິດຊອບ ຂອງຄູ່ຮ່ວມພັດທະນາເອີຣົບທີ່ຈະຮັບປະກັນວ່າ: ເງິນຈາກຜູ້ເສຍອາກອນຂອງຕົນໄດ້ຖືກນຳໃຊ້ໃນ ລັກສະນະທີ່ມີປະສິດທິພາບແລະຍືນຍົງ. ນີ້ ລວມເອົາການຮັບປະກັນການສະໜອງທຶນທີ່ພຽງພໍໂດຍລັດ ຖະບານເພື່ອບຳລຸງຮັກສາພື້ນຖານໂຄງລ່າງແລະການລົງທຶນຕ່າງໆທີ່ໄດ້ຈັດຕັ້ງ ປະຕິບັດໄປແລ້ວ.

ດ້ວຍເຫດນັ້ນ, ພວກເຮົາ ຈຶ່ງຫວັງຈະໄດ້ມີໂອກາດສົນທະນາແລກປ່ຽນວິທີທີ່ຈະປັບປຸງການຄຸ້ມຄອງແລະບໍລິຫານລາຍຮັບພາຍໃນ ແລະ ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມໂປ່ງໃສແລະຄວາມຮັບຜິດຊອບໃນການຄຸ້ມຄອງການເງິນພາກລັດຂອງ ສປປ ລາວ. ພວກເຮົາ ເປັນເອກະພາບກັບລັດຖະບານລາວວ່າ: ນີ້ຈະເປັນພື້ນຖານໃຫ້ແກ່ການຮັບປະກັນການເຕີບໂຕທີ່ຍືນຍົງແລະສະເໝີພາບ ແລະ ປູພື້ນຖານໃຫ້ແກ່ຄວາມຮັບຜິດຊອບຂອງພາກລັດ.

## 4. ສ້າງຄວາມເຂັ້ມແຂງໃຫ້ແກ່ນະໂຍບາຍຄຸ້ມຄອງແລະນຳໃຊ້ທີ່ດິນ ຖືເປັນສິ່ງຈຳເປັນເພື່ອຮັບປະກັນການພັດທະນແບບມີສ່ວນຮ່ວມ, ສະເໝີພາບແລະຍືນຍົງ

ຄູ່ຮ່ວມພັດທະນາເອີຣົບ ໄດ້ສະໜັບສະໜູນໃຫ້ການຊ່ວຍເຫຼືອການຄຸ້ມຄອງທີ່ດິນແບບຍືນຍົງຢູ່ ສປປ ລາວ ມາເປັນເວລາຫຼາຍປີແລ້ວ. ຈຸດປະສົງຂອງພວກເຮົາ ແມ່ນເພື່ອເສີມຂະຫຍາຍການຄ້ຳປະກັນສິດເປັນເຈົ້າຂອງທີ່ດິນໃຫ້ແກ່ປະຊາຊົນທຸກຍາກຢູ່ຕາມເຂດຊົນນະບົດ.

ການທົບທວນກາງສະໄໝຂອງການຈັດຕັ້ງປະຕິບັດແຜນ 7 ໃຫ້ຂໍ້ສັງເກດວ່າ: ບັນດາຊຸມຊົນຊົນນະບົດຢູ່ ສປປ ລາວ ກໍາລັງໄດ້ຮັບຜົນກະທົບໃນທາງລົບຈາກຫຼາຍໂຄງການພັດທະນາທີ່ພົວພັນກັນ ເຊິ່ງລວມທັງການອະນຸມັດການສໍາປະທານທີ່ດິນທີ່ມີລັກສະນະບໍ່ໂປ່ງໃສ ແລະ ການຊື້ທີ່ດິນແບບຜູກຂາດ (ບັນຫາການຜູກຂາດຕະຫຼາດທີ່ດິນໂດຍຜູ້ຊື້) ເນື່ອງຈາກລາວ ໄດ້'ເປີດປະຕູ' ຕໍ່ການຂະຫຍາຍການລົງທຶນຂອງຕ່າງປະເທດເຂົ້າໃນການປູກພືດເພື່ອສົ່ງອອກ, ການຂຸດຄົ້ນໄມ້ ແລະ ບັນດາໂຄງການໄຟຟ້ານໍ້າຕົກຕ່າງໆ ທີ່ ເປັນຜົນເຮັດໃຫ້ຕ້ອງມີການຍົກຍ້າຍບ້ານຫຼາຍແຫ່ງ.

ຕໍ່ສະພາບດັ່ງກ່າວ, ຄູ່ຮ່ວມພັດທະນາເອີຣົບ ໄດ້ໃຫ້ການຊ່ວຍເຫຼືອແກ່ບັນດາຄວາມພະຍາຍາມປັບປຸງນິຕິກໍາທີ່ກໍາລັງດໍາເນີນຢູ່ເພື່ອໃຫ້ຄວາມກະຈ່າງແຈ້ງແລະປັບປຸງກົດໝາຍ, ຂັ້ນຕອນບັງຄັບປະຕິບັດກົດໝາຍທີ່ພົວພັນກັບການນໍາໃຊ້ແລະຄຸ້ມຄອງທີ່ດິນ. ເຫຼົ່ານີ້ ຖືເປັນພື້ນຖານໃຫ້ແກ່ການພັດທະນາແບບຍືນຍົງ ພ້ອມທັງຍັງຮັກສາຄວາມສະຫງົບແລະເປັນທໍາ. ຢ່າງໃດກໍ່ດີ, ພວກເຮົາ ຍັງເປັນຫ່ວງນໍາຮ່າງນະໂນບາຍທີ່ດິນແຫ່ງຊາດສະບັບປະຈຸບັນວ່າ: ຫຼາຍຂໍ້ກໍານົດທີ່ຈະຮັບປະກັນສິດຕໍ່ການເປັນເຈົ້າຂອງນໍາໃຊ້ທີ່ດິນ ນັ້ນຍັງບໍ່ທັນແທດເໝາະ, ເວົ້າສະເພາະ:

ບົດບາດຂອງປະຊາຊົນໃນຂະບວນການລະບຸແລະ ຮັບຮອງເຂດ ທີ່ເໝາະສົມສໍາລັບການລົງທຶນຂອງພາກລັດແລະເອກະຊົນໃສ່ທີ່ດິນ ນັ້ນຄວນໄດ້ຮັບການ ປັບປຸງໃຫ້ເຂັ້ມແຂງເພີ່ມເຕີມ.

ສິດເປັນເຈົ້າຂອງທີ່ດິນ ຫຼື ສິດນໍາໃຊ້ ບໍ່ຄວນຖືກຍົກເລີກໂດຍປາສະຈາກຄວາມຍິນຍອມຂອງຜູ້ຖືຄອງທີ່ດິນ ຍົກເວັ້ນເພື່ອຮັບໃຊ້ຈຸດປະສົງຢ່າງດຽວທີ່ເປັນການສ້າງຜົນປະໂຫຍດຕົ້ນຕໍໂດຍກົງໃຫ້ແກ່ມວນຊົນໂດຍລວມ ພາຍໃຕ້ເງື່ອນໄຂທີ່ວ່າ: ຝ່າຍຕ່າງໆທີ່ຖືກກະທົບ ໄດ້ຮັບການຊົດເຊີຍເຕັມຈໍານວນແລະເປັນທໍາ. ວິທີນີ້ ນໍາໃຊ້ກັບທັງທີ່ດິນຂອງສ່ວນບຸກຄົນ ແລະ ທີ່ດິນຊຸມຊົນລວມໝູ່ ທັງໃນກໍລະນີທີ່ດິນທີ່ ໄດ້ຈາກການຄອບຄອງສືບມູນຕາມປະເພນີທ້ອງຖິ່ນ ຫຼື ທີ່ດິນທີ່ມີໃບຕາດິນຖືກຕ້ອງຕາມກົດໝາຍ.

ຖ້າການສະເໜີເວນຄືນທີ່ດິນ ຫາກບໍ່ຮັບໃຊ້ຜົນປະໂຫຍດຕົ້ນຕໍໂດຍກົງຂອງມວນຊົນ, ທີ່ດິນດັ່ງກ່າວ ຫຼື ສິດນໍາໃຊ້ທີ່ດິນດັ່ງກ່າວ ບໍ່ຄວນຖືກໂອນໃຫ້ຝ່າຍອື່ນໂດຍປາສະຈາກຄວາມຍິນຍອມຂອງຜູ້ຖືຄອງທີ່ດິນທີ່ເປັນສ່ວນບຸກຄົນສໍາລັບທີ່ດິນບຸກຄົນທີ່ສະເໜີໃຫ້ເວນຄືນ ແລະ ຄວາມຍິນຍອມຂອງສຽງສ່ວນໃຫຍ່ 80% ໃນໝູ່ສາມະຊິກພາຍໃນຊຸມຊົນ (ຜ່ານການລົງຄະແນນສຽງ) ສໍາລັບທີ່ດິນຊຸມຊົນທີ່ສະເໜີໃຫ້ເວນຄືນ ໂດຍໃຫ້ປະຕິບັດຕາມຫຼັກການການປົດປ່ອຍກໍາມະສິດກ່ອນ ແລະ ໃຫ້ຄໍາຍິນຍອມໂດຍໄດ້ຮັບຂໍ້ມູນຖືກຕ້ອງຄົບຖ້ວນລ່ວງໜ້າແລະບໍ່ມີການບັງຄັບ.

ການຍົກເລີກສິດເປັນເຈົ້າຂອງທີ່ດິນ ແລະ ການບັງຄັບໃຫ້ຍົກຍ້າຍ ຖືເປັນສາເຫດເຮັດໃຫ້ມີຄວາມທຸກຍາກແລະບັນຫາການຄໍ້າປະກັນສະບຽງອາຫານເພີ່ມສູງຂຶ້ນ ດ້ວຍການຈໍາກັດການເຂົ້າເຖິງການສ້າງລາຍໄດ້ ແລະ ຍັງຖືເປັນການເພີ່ມໜີ້ສິນ. ການກະທໍາດັ່ງກ່າວ ຍັງເປັນຜົນນໍາໄປສູ່ການລະເມີດສິດທິທາງດ້ານເສດຖະກິດ, ສັງຄົມແລະວັດທະນະທໍາ, ສະພາບກະທົບກະເທືອນທາງຈິດໃຈ ແລະ ການລົບກວນຕໍ່ຄວາມສາມັກຄີເປັນເອກະພາບຂອງຊຸມຊົນແລະຄອບຄົວ. ແມ່ຍິງແລະເດັກນ້ອຍ ຍິ່ງສ່ຽງຖືກກະ

ທຶນເປັນພິເສດ. ການຍົກຍ້າຍ ຍັງສ້າງສິ່ງທ້າທາຍຕໍ່ປະສິດທິຜົນຂອງການຮ່ວມມືດ້ານການພັດທະ ນາ ຂອງເອີຣົບ ຍ້ອນການຈັດສັນແບບຖືກບັງຄັບແລະການຍົກຍ້າຍທີ່ມີການວາງແຜນບໍ່ດີ ນັ້ນເປັນການ ສ້າງຄວາມ ເຄັ່ງຕຶງຕໍ່ການວາງແຜນທີ່ຖືກຕ້ອງໃນການສ້າງກິດຈະກໍາພັດທະນາແລະການລົງທຶນ ສ້າງພື້ນຖານໂຄງ ລ່າງ ແລະ ຜົນກະທົບທີ່ມີຕໍ່ຂະແໜງການອື່ນໆ ທີ່ຄູ່ຮ່ວມພັດທະນາ ໄດ້ທຸ້ມເທ ຊັບພະຍາກອນລົງໃສ່ (ເຊັ່ນ: ສາທາ, ສຶກສາ ຫຼື ການສົ່ງເສີມການຫາລ້ຽງຊີບ).

ຮູ້ວ່າ: ຍັງຈະຕ້ອງໃຊ້ເວລາດົນກ່ອນທີ່ສິດຕໍ່ທີ່ດິນຊຸມຊົນ ຈະຖືກຈົດທະບຽນຮັບຮູ້ໃນວົງກ້ວາງໄດ້, ການນໍາໃຊ້ທີ່ ດິນປະເພນີ ຈະສືບຕໍ່ເປັນລະບົບທີ່ດິນລວມໝູ່ຕາມບັນດາເຂດຊົນນະບົດຕ່າງໆ. ດ້ວຍເຫດນັ້ນ, ຄໍາສັບ ທີ່ວ່າ: “ທີ່ດິນຕາມປະເພນີ” ຕ້ອງໄດ້ຮັບການນິຍາມສັບຢ່າງຈະແຈ້ງ.

ກົນໄກໄກ່ເກ່ຍຂໍ້ຂັດແຍ່ງທີ່ດິນທີ່ມີປະສິດທິຜົນ ຈໍາເປັນຕ້ອງກໍານົດເຂົ້າໄວ້ໃນລະບົບເພື່ອແກ້ໄຂບັນດາຂໍ້ ຂັດແຍ່ງທີ່ດິນທີ່ມີເປັນຈໍານວນຫຼາຍໃນລັກສະນະທີ່ເປັນທໍາແລະໂປ່ງໃສ. ນີ້ ສາມາດແກ້ໄຂໄດ້ດ້ວຍ ຕົວ ຢ່າງ: ສ້າງອົງກອນເອກະລາດຂຶ້ນມາທີ່ບໍ່ຂຶ້ນກັບຫ້ອງການໃດໆຂອງລັດ ໂດຍໃຫ້ເປັນອົງການທີ່ມີໜ້າທີ່ ຮັບຜິດຊອບເພື່ອຮັບແລະໄກ່ເກ່ຍຄໍາຮ້ອງທຸກທີ່ພົວພັນກັບຂໍ້ຂັດແຍ່ງທີ່ດິນ ແລະ ມີສິດອໍານາດໃນການ ບັງຄັບປະຕິບັດການຈັດຕັ້ງປະຕິບັດມະຕິໄກ່ເກ່ຍແລະບັນດາກົດໝາຍທີ່ກ່ຽວຂ້ອງ.

ນອກຈາກນັ້ນ, ການສ້າງຖານຂໍ້ມູນຮ່ວມກັນໂດຍບັນດາກະຊວງກ່ຽວຂ້ອງ (MPI, MONRE, MAF) ຍັງ ຈະເປັນບາດກ້າວຈໍາເປັນເພື່ອປັບປຸງການຄຸ້ມຄອງທີ່ດິນດ້ວຍການສະໜອງການເຂົ້າເຖິງເອກະສານ ທີ່ທັນກັບສະພາບປະຈຸບັນແລະແຜນທີ່ ກ່ຽວຂ້ອງກັບການ ອະນຸມັດການສໍາປະທານທີ່ດິນແລະສັນຍາ ເຊົ່າທີ່ດິນໃຫ້ແກ່ທຸກພາກສ່ວນທີ່ມີ ບົດບາດສໍາຄັນໃນຂະແໜງການນີ້ .

ພວກເຮົາ ຍິນດີກັບຄວາມເປັນຈິງທີ່ວ່າ: ສະພາແຫ່ງຊາດ (NA) ບໍ່ໄດ້ຟ້າວຟັ່ງຜ່ານນະໂຍບາຍທີ່ດິນແຫ່ງ ຊາດ (NLP) ໃສກອງປະຊຸມສະພາສະໄໝຫຼ້າສຸດ. ພວກເຮົາ ຂໍຍ້ອງຍໍສະພາແຫ່ງຊາດຕໍ່ມະຕິຂອງສະ ພາທີ່ອະນຸຍາດໃຫ້ມີການສະເໜີເຫດຜົນແລະສົນທະນາແລກປ່ຽນກັນຫຼາຍຂຶ້ນຕື່ມຕໍ່ນະໂຍບາຍດັ່ງກ່າວ. ການຮ່າງນະໂຍບາຍດັ່ງກ່າວຄືນ ຮຽກຮ້ອງໃຫ້ມີການປະກອບສ່ວນຈາກປະຊາຊົນຜູ້ໄດ້ຮັບຜົນກະທົບ ແລະ ການເປີດຮ່າງດັ່ງກ່າວໃຫ້ມີການປະກອບຄໍາເຫັນຈາກມວນຊົນ ດັ່ງທີ່ໄດ້ກໍານົດໄວ້ໃນກົດໝາຍວ່າ ດ້ວຍການສ້າງນິຕິກໍາ.

ລັດຖະບານ ມີນະໂນບາຍຫັນປ່ຽນທີ່ດິນໃຫ້ເປັນທຶນ. ການບັນລຸເປົ້າໝາຍຂອງລັດຖະບານໃນການ ຮັກສາ ການເຕີບໂຕເສດຖະກິດທີ່ເຂັ້ມແຂງ ແມ່ນສາມາດເຮັດໄດ້ພຽງແຕ່ດ້ວຍການມີນະໂຍບາຍ ທີ່ດິນແຫ່ງ ຊາດສົມບູນຮອບຄອບ ແລະ ມີກົດໝາຍທີ່ດິນທີ່ດີແລະຄົບຖ້ວນຮອບດ້ານ. ສປປ ລາວ ຈໍາເປັນຕ້ອງສ້າງ ສະພາບເງື່ອນໄຂທີ່ເອື້ອອໍານວຍສໍາລັບນັກລົງທຶນທີ່ມີຄຸນະພາບ. ນັກລົງທຶນທີ່ມີຄຸນ ນະພາບເຫຼົ່ານັ້ນ ຈະ ລົງທຶນສະເພາະໃນຂອບເຂດທີ່ເຂົາເຈົ້າໄດ້ຮັບການຄໍ້າປະກັນວ່າ: ການລົງທຶນຂອງ ເຂົາເຈົ້າ ບໍ່ມີຄວາມສ່ຽງ ຖືກເອົາ ໄປຈາກເຂົາເຈົ້າ. ເພື່ອສະໜອງການຄໍ້າປະກັນດັ່ງກ່າວ, ຈໍາເປັນຕ້ອງ ມີນິຕິກໍາທີ່ຈະແຈ້ງແລະຄົບຖ້ວນ ຮອບດ້ານໂດຍຕອບສະໜອງໄດ້ຕາມມາດຕະຖານສາກົນ.

## 5. ການພັດທະນາແບບຍືນຍົງ ຂຶ້ນກັບການຄຸ້ມຄອງສິ່ງແວດລ້ອມທີ່ມີປະສິດທິຜົນແລະການຮ່ວມມືຂ້າມຊາຍແດນ

ເອກະສານປະກອບກອງປະຊຸມໂຕະມົນ ໃຫ້ຂໍ້ສັງເກດວ່າ: ຂະແໜງອຸດສາຫະກຳ ໂດຍສະເພາະ: ພະລັງງານແລະບໍ່ແຮ່ ໄດ້ເຕີບໂຕຢ່າງວ່ອງໄວໃນອັດຕາສະເລ່ຍທີ່ປະມານ 13,7 ສ່ວນຮ້ອຍຕໍ່ປີ ແລະປະຈຸບັນນີ້ ປະກອບສ່ວນ 30,3 ສ່ວນຮ້ອຍຂອງ GDP. ເກືອບ 50 ສ່ວນຮ້ອຍຂອງການເຕີບໂຕໃນຂະແໜງດັ່ງກ່າວ ແມ່ນຍ້ອນການລົງທຶນຂະໜາດໃຫຍ່ຂອງພາກເອກະຊົນທັງພາຍໃນແລະພາຍນອກໃນຂະແໜງຊັບພະຍາກອນທຳມະຊາດ (ບໍ່ແຮ່ແລະການຂຸດຄົ້ນແຮ່ທາດ ແລະ ການຜະລິດໄຟຟ້ານ້ຳຕົກ). ເປັນເລື່ອງສຳຄັນທີ່ຕ້ອງຮັບຮູ້ຄວາມຕ້ອງການພະລັງງານທີ່ມີເພີ່ມສູງຂຶ້ນໃນພາກພື້ນ ກໍ່ຄື ການປະກອບສ່ວນຂອງຂະແໜງໄຟຟ້ານ້ຳຕົກເຂົ້າໃນການເຕີບໂຕຂອງເສດຖະກິດ. ຢ່າງໃດກໍ່ດີ, ຖ້າປາສາຈາກການຮ່ວມມືຂ້າມຊາຍແດນ, ສິ່ງແວດລ້ອມແລະຄວາມສົມດຸນທາງລະບົບນິເວດຂອງອ່າງແມ່ນ້ຳຂອງ ຈະຕົກຢູ່ໃນ ອັນຕະລາຍ ເຊິ່ງໝາຍເຖິງຊີວິດການເປັນຢູ່ແລະການຄ້ຳປະກັນສະບຽງອາຫານຂອງ ປະຊາຊົນເປັນຈຳ ນວນຫຼາຍທັງຢູ່ລາວແລະປະເທດອື່ນໆໃນພາກພື້ນນຳອີກດ້ວຍ. ການຮ່ວມມືເອີຣົບເພື່ອການພັດທະນາ ມີແຜນງານຫຼາຍຢ່າງທັງເພື່ອຊ່ວຍອະນຸລັກແລະຂຸດຄົ້ນຊັບພະຍາກອນທຳມະຊາດ. ການບັນລຸຄວາມສົມ ດຸນທີ່ຖືກຕ້ອງລະຫວ່າງການແຮແລະການນຳໃຊ້ຊັບພະຍາກອນ ຖືເປັນສິ່ງທ້າທາຍໃຫຍ່ຫຼວງສຳລັບປະ ເທດລາວ. ເມື່ອເປັນການຂຸດຄົ້ນ, ເປັນເລື່ອງສຳຄັນທີ່ວ່າ: ການຂຸດຄົ້ນດັ່ງກ່າວ ແມ່ນດຳເນີນໄປໃນລັກ ສະນະຍືນຍົງ ແລະ ຮັບປະກັນການກະຈາຍລາຍໄດ້/ຜົນປະໂຫຍດທີ່ເກີດຈາກກິດຈະກຳເຫຼົ່ານັ້ນໃນລັກສະນະສະເໝີພາບ.

***

ຄວາມສຳເລັດໃນການບັນລຸເປົ້າໝາຍຮ່ວມຂອງພວກເຮົາ (ເພື່ອຮັບປະກັນຄວາມຢູ່ດີກິນດີຂອງປະຊາຊົນລາວທຸກຄົນ ແລະ ເວົ້າສະເພາະ ເພື່ອຍົກສູງໂອກາດໃຫ້ແກ່ຄົນທຸກແລະປະຊາ ຊົນລາວຜູ້ດ້ອຍໂອກາດເພື່ອໃຫ້ເຂົາເຈົ້າມີສຸຂະພາບດີ, ມີຄວາມສຸກ ແລະ ຮັບປະກັນ ອະນາຄົດ) ນັ້ນສ່ວນໜຶ່ງແມ່ນຂຶ້ນກັບຈຸດແຂງໃນການຮ່ວມມືຂອງພວກເຮົາ. ກອງປະຊຸມໂຕະມົນປະຈຳ ປີທີ່ມີເປັນປົກກະຕິ ແມ່ນກອງປະຊຸມສຳຄັນທີ່ເສີມຂະຫຍາຍການຮ່ວມມືຂອງພວກເຮົາໃນການເປີດໂອ ກາດໃຫ້ແກ່ການສົນທະນາແລກປ່ຽນ, ການປະເມີນຜົນແບບສ້າງສັນຕໍ່ຄວາມຄືບໜ້າຂອງຜົນໄດ້ຮັບ ດ້ານການພັດທະນາ, ຄວາມໂປ່ງໃສແລະຄວາມຮັບຜິດຊອບຕໍ່ພາກສ່ວນກ່ຽວຂ້ອງຂອງພວກເຮົາ ໂດຍ ສະເພາະຕໍ່ຜູ້ໄດ້ຮັບຜົນປະໂຫຍດຂັ້ນສຸດທ້າຍ ນັ້ນກໍ່ຄືປະຊາຊົນລາວ. ດ້ວຍຈິດໃຈດັ່ງກ່າວ, ພວກເຮົາ ຫວັງວ່າ: ກອງປະຊຸມໂຕະມົນ ໃນປີ 2013 ຈະມີບັນຍາກາດການສົນທະນາທີ່ເກີດໝາກອອກຜົນແລະມີ ຜົນສຳເລັດຈົບງາມ.